ປະຊາ... ຕລາດແລະເຜີຍແຜ່
ເລກທີ... 1172 ກວດ
ລົງວັນທີ 18 JUN 2014
ເວລາ......
ລົງຊື່......

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-------00000-------

ລັດຖະບານ

ເລກທີ..194../ລບ
ນະຄອນຫຼວງວຽງຈັນ, ວັນທີ..12.:.6.:.2014

# ດຳລັດ
# ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍຄອບຄົວ ສະບັບເລກທີ 05/ສພຊ, ລົງວັນທີ 26 ກໍລະກົດ 2008;
- ອີງຕາມກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບເລກທີ 05/ສພຊ, ລົງວັນທີ 27 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງຍຸຕິທຳ ສະບັບເລກທີ..333../ກຍ, ລົງ ວັນທີ.30./14/2014

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ກ່ຽວກັບການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ແນໃສ່ເຮັດໃຫ້ການເອົາເດັກໄປເປັນລູກລ້ຽງຖືກຕ້ອງ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 2 ການເອົາເດັກໄປເປັນລູກລ້ຽງ**

ການເອົາເດັກໄປເປັນລູກລ້ຽງ ແມ່ນການຮັບເອົາເດັກທີ່ເປັນພົນລະເມືອງລາວ ຊຶ່ງເປັນລູກຂອງບຸກຄົນອື່ນໄປລ້ຽງເປັນລູກຂອງຕົນຢູ່ພາຍໃນ ຫຼືຕ່າງປະເທດ ໂດຍຜ່ານຂັ້ນຕອນທີ່ຖືກຕ້ອງຕາມລະບຽບກົດໝາຍ ແລະໄດ້ຮັບອະນຸຍາດຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ຊຶ່ງພາໃຫ້ເກີດມີສິດ ແລະພັນທະທາງຄອບຄົວຕໍ່ກັນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄອບຄົວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. **ລູກລ້ຽງ** ໝາຍເຖິງ ເດັກທີ່ເປັນພົນລະເມືອງລາວ ຊຶ່ງໄດ້ຮັບອະນຸຍາດໃຫ້ໄປເປັນລູກລ້ຽງຂອງບຸກຄົນອື່ນ ຢູ່ພາຍໃນປະເທດ ຫຼືຕ່າງປະເທດ ໂດຍຖືກຕ້ອງຕາມເງື່ອນໄຂ ແລະຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
2. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ;
3. **ພໍ່ຄິງ, ແມ່ຄິງຂອງເດັກ** ໝາຍເຖິງ ພໍ່ແມ່ຜູ້ໃຫ້ກຳເນີດເດັກ;
4. **ຜູ້ປົກຄອງເດັກ** ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ;
5. **ພໍ່ລ້ຽງ, ແມ່ລ້ຽງ** ໝາຍເຖິງ ພົນລະເມືອງລາວ ຫຼືຄົນຕ່າງດ້າວ, ຄົນຕ່າງປະເທດ, ທີ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດອຳນາດກ່ຽວຂ້ອງໃຫ້ເອົາເດັກໄປລ້ຽງເປັນລູກລ້ຽງຂອງຕົນ;
6. **ເດັກທີ່ຂາດການເບິ່ງແຍງລ້ຽງດູ** ໝາຍເຖິງ ເດັກທີ່ຖືກປະລະ, ປະຖິ້ມ, ກຳພ້າ, ກຳພອຍ ທີ່ບໍ່ມີຜູ້ເບິ່ງແຍງລ້ຽງດູ;
7. **ເດັກພິເສດ** ໝາຍເຖິງ ເດັກທີ່ປະສົບກັບບັນຫາທາງດ້ານພຶດຕິກຳ ສະແດງອອກບໍ່ປົກກະຕິ, ພິການທາງດ້ານຮ່າງກາຍ, ມັນສະໝອງ ຫຼືໄດ້ຮັບຜົນກະທົບທາງຈິດໃຈ;
8. **ຄົນຕ່າງດ້າວ** ໝາຍເຖິງ ຄົນສັນຊາດອື່ນ ທີ່ເຂົ້າມາຕັ້ງຖິ່ນຖານ, ອາໄສຢູ່ ສປປ ລາວ ຍາວນານ, ຖືບັດຕ່າງດ້າວ ແລະລັດຖະບານຂອງຜູ້ກ່ຽວກໍຍັງຮັບຮູ້ເປັນທາງການຢູ່;
9. **ຄົນຕ່າງປະເທດ** ໝາຍເຖິງ ຄົນທີ່ມີສັນຊາດອື່ນທີ່ດຳລົງຊີວິດຢູ່ນອກດິນແດນຂອງ ສປປ ລາວ ຫຼື ເຂົ້າມາ ສປປ ລາວ ຊົ່ວຄາວ ຫຼືຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ເມື່ອໝົດກຳນົດແລ້ວກໍກັບຄືນປະເທດຕົນ;
10. **ນັກສັງຄົມສົງເຄາະ** ໝາຍເຖິງ ບຸກຄົນທີ່ມີຄຸນວຸດທິ ແລະມີປະສົບການ ຊຶ່ງໄດ້ຮັບການຢັ້ງຢືນຈາກຂະແໜງການແຮງງານ ແລະສະຫວັດດີສັງຄົມ ເພື່ອໃຫ້ການຊ່ວຍເຫຼືອແກ່ຄອບຄົວ ແລະເດັກ ກ່ອນ ແລະຫຼັງການເອົາເດັກໄປເປັນລູກລ້ຽງ.

**ມາດຕາ 4 ຫຼັກການພື້ນຖານ**

ໃນການພິຈາລະນາທາງເລືອກ ແລະການເບິ່ງແຍງລ້ຽງດູເດັກ ກ່ຽວກັບການເອົາເດັກໄປເປັນລູກລ້ຽງ ຕ້ອງຄຳນຶງເຖິງຫຼັກການພື້ນຖານ ດັ່ງນີ້ :

1. ຜົນປະໂຫຍດສູງສຸດຂອງເດັກ;
2. ບຸລິມະສິດການເອົາເດັກໄປເປັນລູກລ້ຽງພາຍໃນປະເທດ;
3. ການປະສານສົມທົບ;
4. ຄວາມໂປ່ງໃສ, ວ່ອງໄວ ແລະຖືກຕ້ອງຕາມຂັ້ນຕອນ.

**ມາດຕາ 5 ຜົນປະໂຫຍດສູງສຸດຂອງເດັກ**

ໃນການພິຈາລະນາທາງເລືອກ ກ່ຽວກັບການເບິ່ງແຍງລ້ຽງດູເດັກ ຕ້ອງຖືເອົາຜົນປະໂຫຍດສູງສຸດຂອງເດັກເປັນບຸລິມະສິດ ເປັນຕົ້ນ ຄວາມປອດໄພ, ຄວາມຕ້ອງການທາງດ້ານຮ່າງກາຍ, ຈິດໃຈ ແລະລະດັບການພັດທະນາ, ຄວາມສຳຄັນຂອງການຕໍ່ເນື່ອງໃນການເບິ່ງແຍງລ້ຽງດູ, ສາຍພົວພັນທີ່ດີກັບພໍ່ແມ່, ອ້າຍເອື້ອຍນ້ອງຄິງ

ຂອງເດັກ, ບ່ອນຢູ່ທີ່ຮັບປະກັນໃນຖານະເປັນສະມາຊິກຄອບຄົວ, ມໍຣະດົກທາງດ້ານວັດທະນະທຳ, ເຜົ່າຊົນ, ພາສາ , ສາສະໜາ ແລະຄຳເຫັນຂອງເດັກຕາມໄວອາຍຸ ແລະຄວາມສາມາດຈຳແນກຄວາມຖືກຜິດ.

**ມາດຕາ 6 ບູລິມະສິດການເອົາເດັກໄປເປັນລູກລ້ຽງ**

ໃນການພິຈາລະນາການເອົາເດັກໄປເປັນລູກລ້ຽງ ໃຫ້ຖືເອົາການຮັບເດັກໄປເປັນລູກລ້ຽງພາຍໃນປະເທດເປັນບູລິມະສິດ.

**ມາດຕາ 7 ການປະສານສົມທົບ**

ໃນການພິຈາລະນາ ການເອົາເດັກໄປເປັນລູກລ້ຽງ ຕ້ອງຮັບປະກັນການປະສານສົມທົບ ລະຫວ່າງຂະແໜງການ ແລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຄອບຄົວທີ່ເໝາະສົມໃຫ້ເດັກ ຢູ່ພາຍໃນ ຫຼືຕ່າງປະເທດ.

ໃນກໍລະນີທີ່ບໍ່ສາມາດຊອກຫາຄອບຄົວຮັບເດັກໄປເປັນລູກລ້ຽງຢູ່ພາຍໃນເມືອງໄດ້ ໃຫ້ຫ້ອງການຍຸຕິທຳປະສານສົມທົບກັບພະແນກຍຸຕິທຳແຂວງ, ນະຄອນ ເພື່ອຊອກຄອບຄົວທີ່ເໝາະສົມ ຢູ່ເມືອງອື່ນພາຍໃນແຂວງ, ນະຄອນ; ຖ້າຊອກບໍ່ໄດ້ ໃຫ້ລາຍງານຕໍ່ກະຊວງຍຸຕິທຳ ເພື່ອປະສານສົມທົບກັບແຂວງອື່ນ ຊອກຄອບຄົວທີ່ເໝາະສົມຮັບເດັກໄປເປັນລູກລ້ຽງພາຍໃນປະເທດ ຫຼືໄປເປັນລູກລ້ຽງຂອງຄົນຕ່າງປະເທດ.

**ມາດຕາ 8 ຄວາມໂປ່ງໃສ, ວ່ອງໄວ ແລະຖືກຕ້ອງຕາມຂັ້ນຕອນ**

ໃນການພິຈາລະນາກ່ຽວກັບການເອົາເດັກໄປເປັນລູກລ້ຽງ, ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງ ຕ້ອງຮັບປະກັນຄວາມໂປ່ງໃສ, ວ່ອງໄວ, ຖືກຕ້ອງ ແລະຄົບຖ້ວນຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 9 ທາງເລືອກສຳລັບການພິຈາລະນາເບິ່ງແຍງລ້ຽງດູເດັກ**

ທາງເລືອກສຳລັບການພິຈາລະນາເບິ່ງແຍງລ້ຽງດູເດັກ ໃຫ້ປະຕິບັດຕາມລຳດັບ ດັ່ງນີ້ :

1. ສົ່ງເດັກຄືນໃຫ້ຄອບຄົວຂອງເດັກ ຫຼືຍາດພີ່ນ້ອງເປັນຜູ່ເບິ່ງແຍງລ້ຽງດູ;
2. ໃຫ້ເດັກໄປຢູ່ໃນການເບິ່ງແຍງລ້ຽງດູຂອງຜູ່ອື່ນຊົ່ວຄາວ ເພື່ອລໍຖ້າສົ່ງກັບຄອບຄົວ, ຍາດພີ່ນ້ອງຂອງເດັກ ຫຼືລໍຖ້າຄອບຄົວໃໝ່;
3. ໃຫ້ເດັກໄປເປັນລູກລ້ຽງຂອງພົນລະເມືອງລາວ;
4. ໃຫ້ເດັກໄປເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດ;
5. ເອົາເດັກໄປເບິ່ງແຍງດູແລໃນສູນ ຫຼືໃນສະຖານທີ່ເໝາະສົມ.

ນອກຈາກທາງເລືອກ ຕາມທີ່ໄດ້ກຳນົດໄວ້ເທິງນັ້ນແລ້ວ ຍັງມີທາງເລືອກ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 42 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ.

ສຳລັບເດັກທີ່ເປັນຍາດໃກ້ຊິດ, ເດັກພິເສດ ທີ່ຈະຖືກພິຈາລະນາເປັນລູກລ້ຽງ ອາດຈະເລືອກນຳໃຊ້ທາງເລືອກທີສາມ ຫຼືສີ່ ໂດຍບໍ່ປະຕິບັດຕາມລຳດັບກໍໄດ້.

**ມາດຕາ 10 ພັນທະໃນການແຈ້ງ ແລະການປະເມີນເດັກ**

ບຸກຄົນ ຫຼືການຈັດຕັ້ງ ທີ່ໄດ້ຮູ້ເຫັນເດັກ ທີ່ຂາດການເບິ່ງແຍງລ້ຽງດູ, ຖືກປະລະ, ປະຖິ້ມ, ເປັນກຳພ້າ, ກຳພອຍ, ບໍ່ມີຜູ່ປົກຄອງໃຫ້ການເບິ່ງແຍງລ້ຽງດູ ຫຼືມີການໃຊ້ຄວາມຮຸນແຮງຕໍ່ເດັກໃນຄອບຄົວ, ການຂູດຮີດເດັກ